# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດທີ 26 ກັນຍາ 2021 (09-26-2021)**

---

## ແນ່ໃຈໃນໄຊຊະນະ

*ເຣື່ອງການກັບມາທີ່ທ່ານມັກທີ່ສຸດແມ່ນຫຍັງ?*

**ຈຸດສຳຄັນໃນບົດຮຽນ:** ເພາະວ່າພຣະເຢຊູໄດ້ຮັບຊັຍຊະນະ, ໄພ່ພົນຂອງພຣະອົງຈຶ່ງເປັນຜູ້ຊະນະ.

**ພຣະຄັມພີຕອບສນອງຕໍ່ຊີວິດ.** ເມື່ອຂ້າພະເຈົ້າຍັງເປັນເດັກນ້ອຍຢູ່, ລຸງຂອງຂ້າພະເຈົ້າລ້ຽງສັດ. ຂ້າພະເຈົ້າຍັງຈຳໄດ້ຕອນນັ່ງຢູ່ທ້າຍຣົດກະບະເກົ່າທີ່ຟາມເບິ່ງງົວເຖິກສອງໂຕຊົນກັນ. ເຂົາເບິ່ງຄືວ່າບໍ່ສເມີກັນເນື່ອງຈາກວ່າໂຕນຶ່ງຍັງໜຸ່ມແລະອີກໂຕນຶ່ງແກ່ແລ້ວ. ງົວໂຕໜຸ່ມກວ່າອາດວ່ອງໄວກວ່າ, ແຕ່ໂຕແກ່ໃຫຍ່ກວ່າ. ພາຍຫຼັງການຢັນພື້ນ, ແລະຊິດດິນຂຶ້ນເທິງອາກາດ, ງົວທັງສອງໂຕເອົາຫົວດັນກັນແລະເລີ່ມສູ້ຢັນກັນ. ເວລາສ່ວນຫຼາຍ, ງົວໂຕແກ່ກວ່າຊະນະ, ແຕ່ງົວໂຕໜຸ່ມກວ່າໄດ້ປຽບຫຼາຍທີ່ສຸດໃນບາງໂອກາດ.

ເມື່ອຂ້າພະເຈົ້າເບິ່ງສະພາບຂອງໂລກພວກເຮົາ, ຂ້າພະເຈົ້າເຫັນພາບທີ່ຄ້າຍຄືກັນຂອງຄວາມຊອບທັມຕໍ່ສູ້ກັບຄວາມຊົ່ວ. ມີການແຂ່ງຂັນກັນຢ່າງສມໍ່າສເມີລະຫວ່າງສອງຄົນ, ແລະມັນຍາກທີ່ຈະບອກໄດ້ວ່າໃຜຊະນະ. ຖ້າເຈົ້າດຶງເອົາຂໍ້ມູນຂອງເຈົ້າພຽງຜູ້ດຽວຈາກສື່ຂ່າວ, ຄວາມມືດເບິ່ງຄືວ່າຈະຊະນະ. ແຕ່ເມື່ອເຈົ້າອ່ານພຣະທັມຄັມພີ, ເຈົ້າພົບວ່າກົງກັນຂ້າມແມ່ນຄວາມຈິງ. ຄວາມມືດອາດເບິ່ງຄືວ່າຊະນະ, ແຕ່ມັນໄດ້ເອົາຊະນະໄປແລ້ວ. ພຣະເຢຊູໄດ້ຮັບຊັຍຊະນະ, ແລະຜູ້ຕິດຕາມຂອງພຣະອົງຢູ່ຝ່າຍທີ່ຊະນະ. ພວກເຮົາມີ “ເຣື່ອງການກັບມາທີ່ດີທີ່ສຸດ” ເພາະພຣະເຢຊູ!

**ພຣະຄັມພີກ່າວວ່າແນວໃດ :** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>1 ໂຢຮັນ 3:19-22.</u>

[19]*ດ້ວຍເຫດນີ້ແຫລະ, ເຮົາທັງຫລາຍກໍຮູ້ແລ້ວວ່າພວກເຮົາຢູ່ຝ່າຍຄວາມຈິງ ພວກເຮົາຈຶ່ງມີຄວາມແນ່ໃຈຕໍ່ພຣະພັກພຣະອົງ.*
[20]*ເພາະວ່າຖ້າໃຈຂອງພວກເຮົາກ່າວໂທດໃສ່ຕົວເຮົາເມື່ອໃດ ພຣະເຈົ້າຊົງເປັນໃຫຍ່ກວ່າໃຈຂອງພວກເຮົາ ແລະພຣະອົງຊົງ-*
*ຊາບທຸກສິ່ງ.* [21]*ພວກທີ່ຮັກເອີຍ, ຖ້າໃຈຂອງພວກເຮົາບໍ່ກ່າວໂທດໃສ່ຕົວເຮົາ ເຮົາກໍມີຄວາມແນ່ໃຈຕໍ່ພຣະພັກພຣະເຈົ້າ.*
[22]*ແລະພວກເຮົາຂໍສິ່ງໃດ ເຮົາກໍໄດ້ສິ່ງນັ້ນຈາກພຣະອົງ ເພາະວ່າພວກເຮົາຖືຮັກສາຂໍ້ບັນຍັດຂອງພຣະອົງແລະປະຕິບັດຕາມ*
*ຊອບພຣະທັຍພຣະອົງ.*

ໃນຂໍ້ກ່ອນນີ້, ທ່ານໂຢຮັນໄດ້ສອນເຖິງຄວາມຮັບຜິດຊອບຂອງເຮົາໃຫ້ຮັກຊຶ່ງກັນແລະກັນ. ຄວາມຮັກເປັນຫຼັກຖານຂອງຄວາມພົ້ນແທ້ຈິງ, ຊຶ່ງໃນທີ່ສຸດຈະຮັບປະກັນຫົວໃຈຂອງເຮົາ. ໜ້າເສົ້າໃຈ, ພວກເຮົາມີເວລາໃນຊີວິດຂອງພວກເຮົາເມື່ອເຮົາບໍ່ໄດ້ຮັກເທົ່າທີ່ຄວນ. ເມື່ອສິ່ງນີ້ເກີດຂຶ້ນ, ໃຈສຳນຶກຕໍ່ຄວາມຫຼົ້ມເຫຼວສາມາດເຂົ້າໄປໃນຈິດໃຈຂອງພວກເຮົາ ເຮັດໃຫ້ເຮົາຮູ້ສຶກຜິດຕໍ່ໜ້າພຣະເຈົ້າ, ຊຶ່ງໃນທີ່ສຸດຈະເຮັດໃຫ້ເຮົາເຕັມດ້ວຍຄວາມສົງສັຍ. ຄວາມສົງສັຍນີ້ ສາມາດເຮັດໃຫ້ອ່ອນແອ ຊຶ່ງບໍ່ສາມາດຈະເດີນໜ້າໄດ້.

ປາກົດແຈ້ງແລ້ວວ່າ, ຜູ້ອ່ານຂອງທ່ານໂຢຮັນຍັງຂ້ອງໃຈຢູ່ກັບຄວາມສົງສັຍ. ຍ້ອນເຫດຜົນນີ້, ທ່ານໂຢຮັນຈຶ່ງໄດ້ຂຽນ

ເພື່ອຮັບປະກັນເຂົາ. ເພິ່ນເຕືອນເຂົາວ່າພຣະເຈົ້າເບິ່ງຈາກຄວາມຫຼົ້ມເຫຼວຂອງເຮົາຫາຄວາມຕັ້ງໃຈແທ້ຈິງຂອງຫົວໃຈເຮົາ. ເຮົາອາດເຂົ້າໃຈຕົວເຮົາເອງຜິດຜ່ານເລັນ(lens)ຄວາມສົງສັຍຂອງເຮົາ, ການກ່າວໂທດໃສ່ຕົວເອງ, ຫຼືຄວາມຄິດຜິດ, ແຕ່ພຣະເຢຊູເບິ່ງເຮົາຜ່ານຄວາມຊອບທັມຂອງພຣະຄຣິດ. ຈົ່ງຄິດເບິ່ງຄໍາເວົ້າອັນງົດງາມເຫຼົ່ານີ້, *"ເພາະວ່າພຣະເຈົ້າໄດ້ຊົງກະທໍາໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ (2 ໂກຣິນໂທ 5:21).* ນີ້ແມ່ນຂ່າວດີທີ່ຕ້ອງຮູ້ວ່າ, ເມື່ອເຮົາວາງໃຈໃນພາຣະກິດສໍາເຣັດແລ້ວຂອງພຣະຄຣິດ, *"ບັດນີ້ການລົງໂທດຈຶ່ງບໍ່ມີແກ່ຄົນທັງຫລາຍທີ່ຢູ່ໃນພຣະເຢຊູຄຣິດ (ໂຣມ 8:1).*

ຍ້ອນພຣະຄຣິດ, ພວກເຮົາຈຶ່ງສາມາດເດີນໄປໃນຊັຍຊະນະເໜືອຄວາມສົງສັຍ. ຄວາມແນ່ໃຈນີ້ອະນຸຍາດໃຫ້ເຮົາອະທິຖານຢ່າງກ້າຫານຕາມນໍ້າພຣະທັຍຂອງພຣະເຈົ້າ (1 ໂຢຮັນ 5:14). ຄິດເບິ່ງທາງນີ້: ເມື່ອເຮົາເຂົ້າສນິດໃນພຣະຄຣິດດ້ວຍເຊື່ອໝັ້ນ, ການຮັບປະກັນເບົ່ງບານທ່າມກາງເຮົາ, ຊຶ່ງຈະອະນຸຍາດໃຫ້ເຮົາອະທິຖານໃນຄວາມເຊື່ອຕາມນໍ້າພຣະທັຍພຣະເຈົ້າ. ການອະທິຖານ,ໃນທາງນີ້, ນໍາເອົາຄໍາສັນຍາທີ່ວ່າ: "*ພວກທີ່ຮັກເອີຍ, ຖ້າໃຈຂອງພວກເຮົາບໍ່ກ່າວໂທດໃສ່ຕົວເຮົາ ເຮົາກໍມີຄວາມແນ່ໃຈຕໍ່ພຣະພັກພຣະເຈົ້າ. ແລະ ພວກເຮົາຂໍສິ່ງໃດເຮົາກໍໄດ້ສິ່ງນັ້ນຈາກພຣະອົງ ເພາະວ່າພວກເຮົາຖືຮັກສາຂໍ້ບັນຍັດຂອງພຣະອົງ ແລະປະຕິບັດຕາມຊອບພຣະທັຍພຣະອົງ (ຂໍ້ 21-22).*

ແນ່ນອນ, ພຣະສັນຍາຍ່ອມມີເງື່ອນໄຂ: "ພວກເຮົາຖືຮັກສາພຣະບັນຍັດພຣະອົງ." ພຣະເຈົ້າພໍພຣະທັຍຕອບຄໍາອະທິຖານ ເພື່ອປະທານໃຫ້ແກ່ຫົວໃຈທີ່ຟັງຄວາມ. ນີ້ "ເປັນທີ່ພໍພຣະທັຍໃນສາຍພຣະເນດຂອງພຣະອົງ." ເມື່ອບໍ່ນານນີ້, ລູກຊາຍຂອງຂ້າພະເຈົ້າຜູ້ນຶ່ງເຮັດວຽກໜັກ ເພື່ອທ້ອນເງິນຊື້ຣົດເກົ່າຄັນນຶ່ງ. ຂ້າພະເຈົ້າພູມໃຈນໍາລາວ, ເມື່ອລາວຂໍໃຫ້ຂ້າພະເຈົ້າຊ່ວຍຈ່າຍສ່ວນທີ່ບໍ່ພໍ, ຂ້າພຣະເຈົ້າກໍດີໃຈຊ່ວຍ. ເປັນຫຍັງ? ເພາະວ່າລາວເປັນຄົນດຸໝັ່ນ, ເຮັດວຽກໜັກ, ແລະເຮັດໄດ້ດີ. ລາວນັບຖືຄວາມປາຖນາດີຂອງຂ້າພະເຈົ້າ ແລະເຮັດໄດ້ສໍາເຣັດຕາມທີ່ຂ້າພະເຈົ້າຮ້ອງຂໍ. ມັນເຮັດໃຫ້ຂ້າພະເຈົ້າຍິນດີຊ່ອຍ. ລາວບໍ່ໄດ້ພະຍາຍາມເຮັດດີເພື່ອຂ້າພະເຈົ້າ; ລາວເຮັດດີເພື່ອໃຫ້ເປັນທີ່ພໍໃຈຂ້າພະເຈົ້າ. ໃນທາງດຽວກັນ, ພຣະເຈົ້າບໍ່ປາຖນາໃຫ້ເຮົາປະຕິບັດເພື່ອພຣະອົງ; ພຣະອົງປາຖນາໃຫ້ເຮົາເປັນທີ່ພໍພຣະທັຍພຣະອົງ. ພຣະອົງຢາກໃຫ້ການເຊື່ອຟັງຂອງພວກເຮົາເກີດຂຶ້ນຈາກຄວາມຮັກທີ່ເຮົາມີຕໍ່ພຣະອົງ, ບໍ່ແມ່ນພຽງເພາະໜ້າທີ່.

## 2. <u>1 ໂຢຮັນ 3:23-24</u>.

*[23]ນີ້ແຫລະ, ເປັນຂໍ້ບັນຍັດຂອງພຣະເຈົ້າຄືວ່າ ໃຫ້ເຮົາທັງຫລາຍວາງໃຈເຊື່ອໃນພຣະນາມຂອງພຣະເຢຊູຄຣິດ ພຣະບຸດຂອງພຣະອົງ ແລະໃຫ້ພວກເຮົາຮັກຊຶ່ງກັນແລະກັນ ຕາມທີ່ພຣະຄຣິດໄດ້ຊົງບັນຍັດໄວ້ແກ່ພວກເຮົາ. [24]ຜູ້ໃດທີ່ຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງ ກໍຕັ້ງຢູ່ໃນພຣະອົງ ແລະພຣະອົງຊົງສະຖິດຢູ່ໃນຜູ້ນັ້ນ ດ້ວຍເຫດນີ້ແຫລະ, ເຮົາທັງຫລາຍຈຶ່ງຮູ້ວ່າພຣະອົງຊົງສະຖິດຢູ່ໃນພວກເຮົາຄືດ້ວຍພຣະວິນຍານທີ່ພຣະອົງຊົງໂຜດປະທານແກ່ພວກເຮົາແລ້ວ.*

ແນມເຫັນທີແລກ, ການກະທໍາທັງສອງຢ່າງທີ່ພວກເຮົາຖືກເອີ້ນໃຫ້ເຮັດນັ້ນ ຄ້າຍຄືກັບພຣະບັນຍັດສອງຢ່າງຂອງພຣະຄຣິດ: "ເຊື່ອ" ແລະ "ຮັກ." ເຖິງຢ່າງໃດກໍຕາມ, ທ່ານໂຢຮັນໄດ້ອ້າງວ່າເປັນ "ບັນຍັດຂອງເພິ່ນ"ຂໍ້ດຽວ. ບັນຍັດທັງສອງຢ່າງນີ້ທໍາໜ້າທີ່ຄວບຄູ່ກັນໄປ ຖືເປັນການທົດສອບອັນນຶ່ງຂອງຄຣິສຕຽນ. ຖ້າເຮົາເຊື່ອຫຼັກຄໍາສອນຖືກຕ້ອງ, ແລ້ວພວກເຮົາກໍຄວນສະແດງໃຫ້ເຫັນການປະພຶດທີ່ຖືກຕ້ອງ. ພວກເຮົາຢືນຢັນຄວາມເຊື່ອແທ້ຈິງຂອງເຮົາໂດຍການເຊື່ອຟັງບັນຍັດຂໍ້ຕົ້ນວ່າໃຫ້ເຊື່ອຟັງພຣະຄຣິດແລະຮັກຄົນອື່ນ, ຊຶ່ງຈະກາຍເປັນຜົນຮັບປະກັນຄວາມພົ້ນແລະຄວາມໝັ້ນໃຈໃນການອະທິຖານຂອງເຮົາ.

ທ່ານໂຢຮັນໄດ້ຍົກເອົາຄໍາອຸປມາຂອງພຣະເຢຊູເຣື່ອງເຄືອອະງຸ່ນແລະກິ່ງ (ໂຢຮັນ 15:1-8) ດັ່ງທີ່ເພິ່ນຂຽນວ່າ, "*ຜູ້ໃດທີ່ຖືຮັກສາບັນດາຂໍ້ບັນຍັດຂອງພຣະອົງ ກໍຕັ້ງຢູ່ໃນພຣະອົງ ແລະ ພຣະອົງຊົງສະຖິດຢູ່ໃນຜູ້ນັ້ນ ດ້ວຍເຫດນີ້ແຫຼະ, ເຮົາທັງຫຼາຍ*

*ຈິ່ງຮູ້ວ່າພຣະອົງຊົງສະຖິດຢູ່ໃນພວກເຮົາ ຄືດ້ວຍພຣະວິນຍານທີ່ພຣະອົງຊົງໂຜດປະທານແກ່ພວກເຮົາແລ້ວ (ຂໍ້ 24).* ເງື່ອນໄຂໃນການຢູ່ຮ່ວມກັນແມ່ນການຟັງຄວາມ. ການຟັງຄວາມໃນຄວາມເຊື່ອ ແລະການປະຕິບັດເປັນສິ່ງຢືນຢັນວ່າເຮົາ "ຕັ້ງຢູ່." ການຕັ້ງຢູ່ບົ່ງບອກເຖິງຄວາມສັມພັນໃກ້ສິດກັບພຣະຄຣິດ ແລະປາຖນາໃຫ້ເປັນທີ່ພໍພຣະທັຍພຣະອົງບໍ່ວ່າຈະຕ້ອງສູນເສັຽຫຍັງກໍຕາມ.

ຄວາມສັມພັນຊຶ່ງກັນແລະກັນຣະຫວ່າງຜູ້ເຊື່ອແລະພຣະຄຣິດແມ່ນຈຸດສຳຄັນຂອງບົດບາດຄຣິສຕຽນໃນໂລກ. ໂດຍທາງການເຂົ້າສນິດໃນພຣະອົງທາງດຽວທີ່ພວກເຮົາຈະເກີດຜົນດີ-ຜົນຂອງຄວາມຮັກແລະການເຊື່ອຟັງ. ຈົ່ງພິຈາຣະນາຜົນຕອບແທນ. ຍິ່ງພວກເຮົາເຊື່ອ, ຮັກ, ແລະຟັງຄວາມ ຍິ່ງຄວາມເຊື່ອ, ຄວາມຮັກ, ແລະການຟັງຄວາມຍິ່ງເກີດຜົນດີ. ໃນຂນະທີ່ພວກເຮົາຕັ້ງຢູ່ໃນພຣະຄຣິດແລະເກີດຜົນດີຍິ່ງຂຶ້ນຈາກຄວາມເຊື່ອ, ຄວາມຮັກ, ແລະ ການຟັງຄວາມຂອງເຮົາ, ການຮັບປະກັນຂອງເຮົາຍິ່ງເຕີບໃຫຍ່ຂຶ້ນເລື້ອຍໆ. ທ່ານໂຢຮັນບໍ່ໄດ້ເວົ້າເຖິງການກະທຳທີ່ເຮົາເຮັດເພື່ອໃຫ້ໄດ້ຮັບຄວາມພົ້ນ ແຕ່ເວົ້າເຖິງການກະທຳທີ່ພາໃຫ້ຄວາມສັມພັນຂອງເຮົາເລິກເຂົ້າ. ນີ້ແມ່ນເນື້ອແທ້ຂອງການຕັ້ງໝັ້ນຢູ່ໃນພຣະຄຣິດ.

ເວລາເຮົາເຂົ້າມາຫາພຣະຄຣິດໃນຄວາມເຊື່ອ, ພຣະອົງມາສະຖິດຢູ່ໃນໃຈຂອງເຮົາໂດຍທາງພຣະວິນຍານບໍຣິສຸດ(ໂຣມ 8:9-10). ແມ້ຂນະພຣະຄຣິດສະຖິດຢູ່ນຳແລະຕັ້ງຢູ່ໃນຊີວິດເຮົາໂດຍທາງພຣະວິນຍານບໍຣິສຸດ, ພຣະວິນຍານອົງດຽວກັນຈະຊົງດຶງເຮົາໃຫ້ຕັ້ງໝັ້ນຢູ່ໃນພຣະອົງແລະເຊື່ອຟັງພຣະອົງ. ດັ່ງທີ່ທ່ານໂປໂລຂຽນວ່າ: *ພວກເຈົ້າຈົ່ງອົດສາພະຍາຍາມດ້ວຍຄວາມຢຳເກງແລະຕົວສັ່ນ ເພື່ອໃຫ້ໄດ້ຄວາມພົ້ນສັນນັ້ນ ບໍ່ໃຊ່ຈຳເພາະເມື່ອເຮົາຢູ່ນຳພວກເຈົ້າເທົ່ານັ້ນ ແຕ່ຈົ່ງເຮັດຫຼາຍກວ່ານັ້ນອີກເມື່ອເຮົາບໍ່ຢູ່ນຳ.* [13]*ເພາະວ່າແມ່ນພຣະເຈົ້າເປັນຜູ້ຊົງກະທຳການຢູ່ພາຍໃນເຈົ້າທັງຫຼາຍ ໃຫ້ມີໃຈປາດຖະໜາແລະໃຫ້ເຮັດໄປເພື່ອຊອບພຣະທັຍຂອງພຣະອົງ(ຟີລິບປອຍ 2:12ຂ-13).* ການໃຊ້ຊີວິດໃນຄວາມພົ້ນ ແລະການຕັ້ງໝັ້ນຢູ່ໃນພຣະຄຣິດຂອງເຮົາ ແມ່ນຜົນຂອງພຣະວິນຍານທຳງານໃນເຮົາກ່ອນ. ຫຼັກຖານການສະຖິດນຳຂອງພຣະວິນຍານປູກຝັງການຄ້ຳປະກັນໃນໃຈຂອງຜູ້ເຊື່ອ, ແລະ ການຄ້ຳປະກັນນັ້ນປູກຝັງຜົນຂອງພຣະວິນຍານ.

ຂ້າພະເຈົ້າເຄີຍໄດ້ໄປຢ້ຽມຢາມຄຣິສຕຽນທີ່ມີຄວາມສົງສັຍ. ສຸພາບສະຕຣີຜູ້ນຶ່ງແຕ່ລະວັນນາງມັກຈະຂ້ອງໃຈກັບຄວາມຈິງຂອງການຮັບປະກັນຕລອດໄປເປັນນິດ. ນາງເຢັນລົງໃນຄວາມຢ້ານຊຶ່ງພາໃຫ້ຜົນຝ່າຍວິນຍານເປັນທຸກໜັກ. ທ່ານອາດຈະພົບວ່າທ່ານຕົກຢູ່ໃນສະພາບດຽວກັນ, ຮູ້ສຶກສັບສົນຫຼືຮູ້ສຶກຫົວໃຈສລາຍ. ພຣະສັນຍາໃນການໃຫ້ອະພັຍຂອງພຣະເຈົ້າຄອບຄອງຫົວໃຈທີ່ບອບຊ້ຳ. ຢ່າປ່ອຍວາງຄວາມປອດພັຍຂອງທ່ານໄວ້ກັບສິ່ງທີ່ທ່ານຮູ້ສຶກ, ແຕ່ຈົ່ງວາງໄວ້ກັບສິ່ງທີ່ທ່ານຮູ້. ພວກເຮົາມີຊັຍຊະນະເພາະວ່າເຮົາຕັ້ງຢູ່ໃນພຣະເຢຊູແລະພຣະອົງຕັ້ງຢູ່ໃນເຮົາ.

*ຕັ້ງໝັ້ນຢູ່ໃນພຣະຄຣິດໝາຍຄວາມວ່າຢ່າງໃດ?*

## 3. 1 ໂຢຮັນ 4:1-4.

[1]*ພວກທີ່ຮັກເອີຍ, ຢ່າເຊື່ອວິນຍານທຸກດວງ ແຕ່ຈົ່ງພິສູດວິນຍານທັງຫຼາຍນັ້ນວ່າມາຈາກພຣະເຈົ້າຫຼືບໍ່ ເພາະວ່າມີຜູ້ທຳນວາຍປອມຫຼາຍຄົນໄດ້ອອກໄປໃນໂລກ.* [2]*ດ້ວຍຂໍ້ນີ້ແຫຼະ, ເຈົ້າທັງຫຼາຍກໍຈະຮູ້ຈັກພຣະວິນຍານຂອງພຣະເຈົ້າ ຄືວິນຍານທັງປວງທີ່ຍອມຮັບຮູ້ວ່າພຣະເຢຊູຄຣິດໄດ້ສະເດັດລົງມາຮັບຊາດເປັນມະນຸດ ວິນຍານນັ້ນກໍມາຈາກພຣະເຈົ້າ.* [3]*ແລະວິນຍານທັງປວງທີ່ບໍ່ຍອມຮັບຮູ້ພຣະເຢຊູ ວິນຍານນັ້ນກໍບໍ່ໄດ້ມາຈາກພຣະເຈົ້າ ວິນຍານນັ້ນແຫຼະ, ເປັນວິນຍານຂອງຜູ້ຕໍ່ສູ້ພຣະຄຣິດ ຊຶ່ງເຈົ້າໄດ້ຍິນວ່າຈະມາ ແລະບັດນີ້ກໍຢູ່ໃນໂລກແລ້ວ.* [4]*ລູກນ້ອຍທັງຫຼາຍເອີຍ, ສ່ວນເຈົ້າທັງຫຼາຍກໍເປັນຝ່າຍພຣະເຈົ້າ ແລະໄດ້ຊະນະເຂົາເຫລົ່ານັ້ນແລ້ວ ເພາະວ່າພຣະອົງຜູ້ຊົງສະຖິດຢູ່ໃນພວກເຈົ້າ ຊົງເປັນໃຫຍ່ກວ່າຜູ້ນັ້ນທີ່ຢູ່ໃນໂລກ.*

ຄວາມສັມພັນຂອງເຮົາກັບພຣະຄຣິດເປັນບໍ່ເກີດແຫ່ງຊັຍຊະນະເໜືອໂລກ. ໃນເມື່ອພຣະວິນຍານຂອງພຣະອົງສະຖິດຢູ່ໃນເຮົາ, ຄຣິສຕຽນທຸກຄົນໄດ້ຮັບຣິດອຳນາດໃຫ້ມີຊັຍຊະນະຕໍ່ໂລກ. ພຣະຄຣິດຄອບຄອງທຸກສິ່ງໃນໂລກນີ້ ລວມທັງພໍ່ທຳນວາຍ

ປອມແລະຜູ້ຕໍ່ສູ້ພຣະຄຣິດທຸກຄົນ. ພວກເຮົາຄວນມີສະຕິລະວັງຕົວຕໍ່ຄໍາສອນປອມ. ພວກທໍານວາຍປອມແມ່ນເຈົ້ານາຍຂອງຄວາມສັບສົນ, ແຕ່ອັຄສາວົກໂປໂລຮັບປະກັນວ່າ, "*ພຣະເຈົ້າບໍ່ໃຊ່ເປັນຜູ້ກໍ່ເຫດໃຫ້ສັບສົນ ແຕ່ຊົງໃຫ້ເກີດຄວາມສງົບ (1 ໂກຣິນໂທ 14:33).* ພຣະເຈົ້າປາຖນາໃຫ້ຄວາມສງົບຄອບຄອງຫົວໃຈຂອງຜູ້ເຊື່ອ. ຄວາມຮັບຜິດຊອບຕົກເປັນຂອງໄພ່ພົນຂອງພຣະເຈົ້າທີ່ຕ້ອງຮຽນສັງເກດຄວາມຈິງຈາກຄໍາສອນຜິດ. ພວກເຮົາຈະຕ້ອງ "ທົດສອບວິນຍານ." ສິດຍາພິບານທີ່ນັບຖືພຣະເຈົ້າເຄັ່ງຄັດຈະບໍ່ຮູ້ສຶກເຄືອງໃຈທີ່ທ່ານໄດ້ຊັ່ງຊາຕໍ່ສິ່ງທີ່ເພິ່ນກໍາລັງເວົ້າຕໍ່ກັບພຣະຄັມພີ. ຊາວເບຣອຍອາ ກວດເບິ່ງພຣະຄັມພີທຸກວັນເພື່ອເບິ່ງວ່າຄໍາສອນຂອງອັຄສາວົກໂປໂລ "ຖືກຕ້ອງບໍ່" ຜູ້ທີ່ເຮັດດັ່ງນັ້ນຖືກເອີ້ນວ່າ "ຜູ້ສຸດຍອດ" (ກຈກ 17:11)!

*ທ່ານພົບເຫັນວິນຍານຂອງຜູ້ຕໍ່ສູ້ພຣະຄຣິດທໍາງານໃນວັທນາທັມຂອງເຮົາບ່ອນໃດ?*

ການທົດສອບໃນທີ່ສຸດເປັນດັ່ງນີ້: ຄໍາສອນຫຼືຄໍາເທສນາເວົ້າແນວໃດກ່ຽວກັບພຣະເຢຊູຄຣິດ? ແນ່ນອນ, ຄໍາສອນປອມອື່ນໆກໍສາມາດມີມາໂດຍສະເພາະຖ້າມັນບໍ່ໄດ້ຍຶດຍົງກັບພຣະຄັມພີຄືຖ້ອຍຄໍາທີ່ໄດ້ຮັບການດົນໃຈແລະສິດອໍານາດຈາກພຣະເຈົ້າ *(ຄາລາເຕັຽ 1:6-9).* ລັດທິນອກຮີດແລະຄຣູສອນປອມມີຊື່ສຽງຍ້ອນສິ່ງທີ່ເຂົາຕັດອອກຈາກພຣະທັມພຣະເຈົ້າຫຼື ສິ່ງທີ່ເຂົາເພີ່ມເຕີມໃສ່ (ພຣະນິມິດ 22:18-19). ແຕ່ແກ່ນແທ້ຂອງຫຼັກຄໍາສອນເລີ່ມຕົ້ນຢູ່ບ່ອນທີ່ເຂົາຢືນຢັດຢູ່ໃນຄວາມຈິງວ່າ,"-*ພຣະເຢຊູຄຣິດໄດ້ສະເດັດລົງມາຮັບຊາດເປັນມະນຸດ (ຂໍ້ 2).*

ບາງເວລາ, ເບິ່ງຄືວ່າໂລກໄດ້ຊັຍຊະນະ. ການແຜ່ຂຍາຍຂອງຄວາມຊົ່ວຮ້າຍໃນວັທນາທັມຂອງເຮົາແນ່ນອນຄືຈັ່ງວ່າມັນໄດ້ຍຶດພື້ນແຜ່ນດິນໄປໝົດແລ້ວ. ເຖິງປານນັ້ນ, ພວກເຮົາຍັງສະບາຍໃຈໄດ້, ເພາະຊັຍຊະນະໃນພຣະຄຣິດໄດ້ຮັບການຮັບປະກັນແລ້ວ, ແລະພວກເຮົາສາມາດສລອງຊັຍຊະນະແຕ່ດຽວນີ້!

*ແມ່ນຫຍັງຄືຂັ້ນຕອນທີ່ທ່ານໃຊ້ເພື່ອຕັດສິນວ່າບາງຢ່າງແມ່ນຂອງພຣະເຈົ້າຫຼືຂອງສັດຕຣູ?*

## ນໍາໃຊ້ໃນຊີວິດ

ເພາະວ່າພຣະຄຣິດໄດ້ຮັບຊັຍຊະນະແລ້ວ, ໄພ່ພົນຂອງພຣະອົງກໍເປັນຜູ້ມີໄຊ. ຈົ່ງເລືອກການນໍາໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ຈົ່ງກວດກາຊີວິດທ່ານ.** ທ່ານປະເຊີນກັບຄວາມສົງສັຍບໍ່? ຖ້າມີ, ຈົ່ງຕອບຄໍາຖາມສອງຂໍ້ນີ້: ທ່ານເຊື່ອຄວາມຈິງຂອງພຣະຄຣິດດັ່ງທີ່ສອນໃນຂໍ້ພຣະຄັມພີບໍ່? ທ່ານຮັກອ້າຍນ້ອງຄົນອື່ນໆໃນພຣະຄຣິດບໍ່? ຖ້າທ່ານຕອບວ່າແມ່ນຕໍ່ສອງຄໍາຖາມ, ແລ້ວທ່ານກໍບໍ່ມີເຫດຜົນທີ່ຈະສົງສັຍ. ຖ້າທ່ານຕອບວ່າບໍ່ຕໍ່ຂໍ້ໃດຂໍ້ນຶ່ງ ຈົ່ງເລົ່າເຣື່ອງຄວາມສົງສັຍໃຫ້ຫົວໜ້າກຸ່ມຂອງທ່ານຟັງ.
- **ຈົ່ງປັບຊີວິດຂອງທ່ານ.** ຈົ່ງແນ່ໃຈວ່າທ່ານໄດ້ປະຕິບັດວິນັຍຝ່າຍວິນຍານເປັນປົກກະຕິ.ຈົ່ງປະຕິບັດເຊັ່ນດຽວກັນກັບການອະທິຖານ, ສຶກສາພຣະຄັມພີ, ທ່ອງຈໍາຂໍ້ພຣະທັມ, ຖືສິນອົດອາຫານ, ຈົດບັນທຶກ, ແລະຮັບໃຊ້. ວິນັຍແຕ່ລະຢ່າງຈະຊ່ອຍໃຫ້ທ່ານເດີນໄປກັບພຣະຄຣິດ.
- **ຈົ່ງເຮັດໃຫ້ມີການປ່ຽນແປງໃນຊີວິດຂອງຜູ້ໃດຜູ້ນຶ່ງ.** ທ່ານຮູ້ຈັກຜູ້ໃດທີ່ສົງສັຍບໍ່? ຈົ່ງໃຊ້ເວລາພາເຂົາອ່ານພຣະທັມ 1 ໂຢຮັນ. ຈົ່ງຕັ້ງຄໍາຖາມເຊັ່ນວ່າ: ທ່ານປາຖນາທີ່ຈະມີຄວາມສັມພັນກັບພຣະຄຣິດບໍ່? ທ່ານມີຄວາມຮູ້ສຶກຕໍ່ຄວາມບາບໃນຊີວິດທ່ານບໍ່? ທ່ານເຊື່ອໃນສິ່ງທີ່ພຣະຄັມພີສອນກ່ຽວພຣະຄຣິດບໍ່? ທ່ານມີຄວາມຊິງຊັງຜູ້ອື່ນໃນໃຈບໍ່?

ເບິ່ງຄືວ່າໂລກມີຊັຍຊະນະ, ແຕ່ເປັນການດີທີ່ຈະຈົດຈໍາເຣື່ອງລາວທັງໝົດ. ພຣະເຢຊູຊົງໄດ້ຮັບຊັຍຊະນະແລ້ວ, ແລະພວກເຮົາມີທຸກສິ່ງລໍຢູ່ຂ້າງໜ້າຊຶ່ງລ້ວນແຕ່ແມ່ນຜົນດີທັງນັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ https://lsbf.us ແປໂດຍ PSI**